# ຜົນດີຂອງການໃຫ້ໂອກາດ ແກ່ໄວໜຸ່ມຊົນເຜົ່າ ມາເຮັດວຽກການພັດທະນາ ຈະເຮັດໃຫ້ວຽກງານຂອງທ່ານປະສົບຜົນສໍາເລັດໄດ້ໄວຂຶ້ນ



| ID: | Author: | Organization: | Created date: |
| --- | --- | --- | --- |
| 82 | Youth | Age-discriminated vulnerable groups, notably the young and the elderly | 2020-03-12 00:00:00 |

## 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

ກ່ຽວກັບບັນຫາໄວໜຸ່ມທີ່ມາຈາກຊົນນະບົດ ທີ່ຮຽນຈົບມາແລ້ວ ບໍ່ມີວຽກເຮັດງານທໍາມີຈໍານວນຫຼວງຫຼາຍ, ບາງຈໍານວນກໍຍ້ອນ ຢູ່ເຂດຫ່າງໄກ່ສອກຫຼີກ, ບາງຄົນກໍຕ້ອງຊ່ວຍວຽກຄອບຄົວເຮັດວຽກໄຮ່ນາ ຍ້ອນຂາດແຮງງານ, ບາງຄົນກໍບໍ່ຮູ້ວ່າຈະເຮັດຫຍັງພາຍຫຼັງຮຽນຈົບ, ດັ່ງນັ້ນ ການຫວ່າງງານ ຂອງໄວໜຸ່ມໃນຊົນນະບົດຈຶ່ງມີຫຼາຍ ແລະ ຄວາມຮູ້ຄວາມສາມາດທີ່ເຂົາເຈົ້າໄດ້ຮໍ່າຮຽນມາກໍບໍ່ໄດ້ຖືກນໍາໃຊ້.

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

- ***ສະມາຄົມ MHP*** ມີເປົ້າໝາຍເຮັດວຽກກ່ຽວກັບການສ້າງ ຄວາມອາດສາມາດໃຫ້ແກ່ຊຸມຊົນ ໂດຍສະເພາະ ແມ່ຍິງຮ່ວມກັບຜູ້ທຸກທີ່ສຸດ ແລະ ຜູ້ດ້ອຍໂອກາດຢູ່ຊົນນະບົດ ເພື່ອໃຫ້ມີຄຸນະພາບຊີວິດທີ່ດີກ່ວາເກົ່າ, ເພິ່ງພາຕົນເອງໄດ້ ແລະ ມີຄວາມຍືນຍົງເຊື່ອມໂຍງເລີກດ້ານການປົກປັກຮັກສາ ແລະ ບູລະນະເຄື່ອງປ່າຂອງດົງ ແລະ ໄມ້ປ່ອງ, ເພື່ອສົ່ງເສີມເຂົ້າໃນວຽກງານຫັດຖະກໍາເສີມສ້າງລາຍຮັບ, ຮັບ ປະກັນດ້ານສະບຽງອາຫານ, ໂພສະນາການອາຫານຂອງແມ່ ແລະ ເດັກນ້ອຍ. ພ້ອມດຽວກັນນັ້ນ, ຍັງມີຄວາມປາດຖະໜາຈະປູກຈິດສໍານຶກດ້ານບົດບາດຍິງ - ຊາຍ, ການປົກປ້ອງສິດທິ ແມ່ຍິງ ແລະ ເດັກນ້ອຍ ແລະ

ຮັກສາສິ່ງແວດລ້ອມພາຍໃນເຫດສະບານ

- ສະມາຄົມ MHP ໄດ້ນຳໃຊ້ເຄື່ອງມື ລະບົບການຮຽນຮູ້ ການປະຕິບັດຕົວຈິງ ດ້ານບົດບາດຍິງ-ຊາຍ (GALS) ເຂົ້າໃນການເຮັດວຽກກັບຊຸມຊົນ, ຄັດເລືອກກຸ່ມເປົ້າໝາຍ ແລະ ວິເຄາະບັນຫາ ຫຼື ທາແຮງຕ່າງໆ, ເພື່ອໃຫ້ການພັດທະນາທີ່ຕົງກັບເປົ້າໝາຍ, ໃຫ້ໂອກາດໄວໜຸ່ມຊົນເຜົ່າ ທີ່ມີຄວາມສົນໃຈທີ່ຢາກພັດທະນາຕົນເອງ ແລະ ພັດທະນາສັງຄົມເຂົ້າມາຝຶກສ້ອມເປັນພະນັກງານອາສາສະມັກຊົນເຜົ່າ ໂດຍຜ່ານຂະບວນການພັດທະນາບຸກຄະລາກອນ ຮ່ວມກັບພະນັກງານຂອງອົງກອນ
-

## 3. ຜົນສຳເລັດຂອງໂຄງການ / Results of the project

ປັດຈຸບັນ ພະນັກງານອາສາສະໝັກຊົນເຜົ່າ ຈາກຊຸມຊົນ ທີ່ໄດ້ພັດທະນາຕົວເອງ 3 ທ່ານ ໄດ້ກາຍມາເປັນ ພະນັກງານຂອງອົງກອນ 100%, ໃນຕຳແໜ່ງ ຜູ້ອຳນວຍຄວາມສະດວກ ຫຼື ຄູ່ຝຶກເຄື່ອງມື ລະບົບການຮຽນຮູ້ ການປະຕິບັດຕົວຈິງ ດ້ານບົດບາດຍິງ-ຊາຍ (GALS) ຂັ້ນຊຸມຊົນໄດ້.

## 4. ປັດໄຈສູ່ຜົນສຳເລັດ / Factors of success

- ໄວໜຸ່ມມີຄວາມຕັ້ງໃຈ ແລະ ມີການຮຽນຮູ້ໄດ້ໄວ ໃນການພັດທະນາຕົນເອງ
- ໄວໜຸ່ມທີ່ເປັນຊົນເຜົ່າມີຄວາມເຂົ້າໃຈ, ສື່ສານກັບປະຊາຊົນໃນກຸ່ມບ້ານເປົ້າໝາຍເຂົ້າໃຈກັນດີ ແລະ ປະຊາຊົນຈະບໍ່ມີຄວາມເຄັ່ງຕຶງໃນການເຮັດວຽກ, ທຸກຄົນຈະມີສວນຮ່ວມໄດ້ເຕັມທີ່

## 5. ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສຳເລັດຜົນໄດ້ດີ / Limitations

ໃນການທີ່ຈະມອບວຽກງານໃຫ້ກັບກຸ່ມໄວໜຸ່ມຊົນເຜົ່າ ພວກເຮົາຕ້ອງໄດ້ຮູ້ວ່າ ເຂົາເຈົ້າມີຄວາມທະນັດ ແລະ ມັກໃນດ້ານນັ້ນ ແລະ ມັກທີ່ຈະຮຽນຮູ້

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

ຖ້າທ່ານມີຄວາມສົນໃຈຢາກຈະຮຽນຮູ້ ທ່ານຕ້ອງໄດ້ມີທີ່ປຶກສາ ຮູ້ກຸ່ມເປົ້າໝາຍທີ່ທ່ານຈະເຮັດວຽກຮ່ວມ ເພື່ອງາຍໃນການຄັດເລືອກກຸ່ມອາສາສະໝັກເຂົ້າຮ່ວມກິດຈະກຳຂອງທ່ານໃຫ້ສຳເລັດໄດ້







